# ທຄຕລ ຮ່ວມສົ່ງພະລັງໃຈຕ້ານໄພ COVID-19
# ມອບເງິນໃຫ້ແກ່ລັດຖະບານລາວ ມູນຄ່າ 500 ລ້ານ ກີບ




ຄະນະຜູ້ບໍລິຫານ ແລະ ພະນັກງານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ ຫຼື BCEL) ປະກອບສ່ວນໃນຂະບວນການຮັກຊາດຕ້ານການລະບາດຂອງພະຍາດ COVID-19 ໂດຍການມອບເງິນໃຫ້ແກ່ລັດຖະບານລາວ ເພື່ອປະກອບສ່ວນຂະບວນການຄວບຄຸມ ສະກັດກັ້ນການລະບາດຂອງພະຍາດໂຄວິດ 19 ທີ່ກຳລັງລະບາດໃນສັງຄົມລາວ, ຄະນະບໍລິຫານງານ ທຄຕລ ເຫັນດີເປັນເອກະພາບໃນການ ປະກອບສ່ວນເປັນເງິນ **500 ລ້ານກີບ** ໃຫ້ຄະນະສະເພາະກິດຂັ້ນສູນກາງ ເຊິ່ງໃຫ້ກຽດຕາງໜ້າມອບໂດຍ ທ່ານ ວຽງສຸກ ຈຸນທະວົງ ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ແລະ ຕາງໜ້າລັດຖະບານກ່າວຮັບໂດຍ ທ່ານ ປອ ກິແກ້ວ ໄຂຄຳພິທູນ ຮອງນາຍົກລັດຖະມົນຕີ, ຫົວໜ້າຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ 19 ແລະ ພາຍໃຕ້ການເຂົ້າຮ່ວມຂອງພະນັກງານທີ່ກ່ຽວຂ້ອງ.

ພິທີມອບ-ຮັບເງິນດັ່ງກ່າວໄດ້ຈັດຂຶ້ນທີ່ສຳນັກງານນາຍົກລັດຖະມົນຕີໃນຕອນເຊົ້າ ວັນທີ 28/04/2021 ເຊິ່ງໄດ້ດຳເນີນໄປຢ່າງອົບອຸ່ນ ໂອກາດດັ່ງກ່າວ ທາງຄະນະລັດຖະບານລາວ ກໍ່ໄດ້ກ່າວສະແດງຄວາມຂອບໃຈຢ່າງເລິກເຊິ່ງມາຍັງຄະນະຜູ້ບໍລິຫານງານ ແລະ ພະນັກງານ ທຄຕລ ທີ່ຍາມໃດກໍ່ເຫັນໄດ້ຄວາມສຳຄັນຂອງວຽກງານອັນລວມຂອງຊາດກໍ່ຄືຂອງປະຊາຊົນ, ໂດຍສະເພາະວຽກງານຕ້ານພະຍາດ COVID-19 ໃນໄລຍະນີ້ ແລະ ໄດ້ປະກອບສ່ວນຮ່ວມຂະບວນການຮັກຊາດຕະຫຼອດມາ.

ໃນປີ 2020 ທີ່ຜ່ານມາ ທຄຕລ ກໍ່ໄດ້ປະກອບສ່ວນສົ່ງແຮງໃຈ ສູ້ໄພຕ້ານ COVID-19 ໂດຍການປະກອບສ່ວນໃນຂະບວນການຕ້ານການລະບາດຂອງພະຍາດໃຫ້ແກ່ລັດຖະບານລາວ ຈຳນວນເງິນ **500 ລ້ານກີບ** ພ້ອມນັ້ນກໍໄດ້ນຳໃຊ້ຊ່ອງທາງເອເລັກໂທຣນິກຂອງ ທຄຕລ ເປີດການລະດົມທຶນຈາກສັງຄົມເພື່ອອຳນວຍຄວາມສະດວກສຳລັບລູກຄ້າຂອງ ທຄຕລ ທີ່ຢາກປະກອບສ່ວນສົມທົບທຶນ ໂດຍຜ່ານລະບົບ BCEL OneHeart ໃນໂຄງການ “ລະດົມທຶນໃຫ້ການຊ່ວຍເຫຼືອເພື່ອຕ້ານໂລກລະບາດ COVID-19” ເຊິ່ງຜ່ານມາ ທຄຕລ ກໍ່ໄດ້ຕາງໜ້າຜູ້ບໍລິຈາກ ມອບເງິນບໍລິຈາກຂອງສັງຄົມທີ່ລະດົມໄດ້ຜ່ານໂຄງການດັ່ງກ່າວ ໃຫ້ກັບ 7 ພາກສ່ວນ ໂດຍມອບເປັນ

ວັດຖຸ ແລະ ເຄື່ອງມືການແພດທີ່ຈຳເປັນ ມູນຄ່າ **130.600.000 ກີບ (ຄັ້ງທີ 1)** ແລະ ຍັງຈະສືບຕໍ່ລະດົມທຶນຈາກສັງຄົມ ແລະ ພະນັກງານ ທຄຕລ ທົ່ວລະບົບ ເພື່ອຊ່ວຍເຫຼືອຕື່ມອີກ. ສຳລັບລູກຄ້າຂອງ ທຄຕລ ທີ່ນຳໃຊ້ BCEL One ຢາກປະກອບສ່ວນສົມທົບທຶນໃນໂຄງການ BCEL OneHeart “ລະດົມທຶນໃຫ້ການຊ່ວຍເຫຼືອເພື່ອຕ້ານໂລກລະບາດ COVID-19” ແມ່ນສາມາດຮ່ວມບໍລິຈາກໄດ້, ລາຍລະອຽດສາມາດເຂົ້າເບິ່ງໄດ້ຜ່ານລິ້ງນີ້: https://oneheart.la/projects/oneheartcovid19, ສຳລັບພິທີການມອບ-ຮັບການຊ່ວຍເຫຼືອໃນແຕ່ລະຄັ້ງຂອງໂຄງການນັ້ນແມ່ນຈະແຈ້ງໃຫ້ສັງຄົມຮັບຊາບຜ່ານທາງສື່ຂອງ ທຄຕລ ເປັນແຕ່ລະໄລຍະ.

-----------------------------

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
#ທັນສະໄໝວ່ອງໄວໝັ້ນໃຈ
✔ສອບຖາມຂໍ້ມູນເພີ່ມຕື່ມ: ໂທ 1555
✔ແກ້ໄຂບັນຫາການໃຊ້ບໍລິການ:
ໂທ/ຂໍ້ຄວາມ ຫາ ທີມງານ OneCare Support ຜ່ານ ແອັບ BCELOne

✔ຊ່ອງທາງຕິດຕາມຂໍ້ມູນຂ່າວສານ:
www.bcel.com.la
Facebook, Instagram, TikTok: BCEL Bank
Youtube: BCEL Channel